ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1281 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2021

**ໜັງສືແຈ້ງເຊີນປະມູນ**

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສຳລັບ ວ່າຈ້າງຊ່ຽວຊານ ແລະ ຈັດຊື້ອຸປະກອນລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ ຮັບໃຊ້ລະບົບຄຸ້ມຄອງງົບປະມານແຫ່ງລັດ (GFIS) ໄລຍະ2 ສະບັບເລກທີ 0894/ກງ, ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ໜັງສືສະເໜີຂອງສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ສະບັບເລກທີ 0263/ສພຂງ, ລົງວັນທີ 16 ມິຖຸນາ 2021.

**ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈ ປະມູນຈັດຊື້-ຈັດຈ້າງ ຊາບວ່າ:**

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2021 ບ້ວງທັນເປັນທັນສະໄໝ ເພື່ອດຳເນີນການຈັດຊື້ເຄື່ອງຄອມພິວເຕີ ແລະ ອຸປະກອນໄອທີ ສຳລັບແຂວງ ແລະ ເມືອງ ດ້ວຍຮູບແບບການດຳເນີນການປະມູນເປີດກວ້າງພາຍໃນ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/-ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ຕ້ອງມີໃບອະນຸຍາດດຳເນີນທຸລະກິດທາງດ້ານໂທລະຄົມມະນາຄົມ ກ່ຽວກັບການຈຳໜ່າຍ ແລະ ຕິດຕັ້ງອຸປະກອນໄອທີ ທີ່ຖືກຕ້ອງຕາມກົດຫມາຍຂອງ ສປປ ລາວ, ມີໃບຢັ້ງຢືນການມອບພັນທະອາກອນປະຈຳປີ 2020, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນ ແລະ ໃບຮັບເງິນຂອງຄັງເງິນທີ່ໄດ້ມອບທຸກຄັ້ງ ໃນປີ 2020 ມາແທນ;
4. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈຊື້ຊອງປະມູນ ສາມາດຊື້ໄດ້ທີ່ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766, ຂາຍຊອງປະມູນ 1.000.000ກີບ, ເລີ່ມແຕ່ວັນທີ 09 ກໍລະກົດ ຫາ 30 ກໍລະກົດ 2021, ຊອງປະມູນຕ້ອງສົ່ງກ່ອນເວລາ 13:30 ໂມງ ແລະ ຈະໄດ້ເປີດຊອງປະມູນໃນເວລາ 13:45 ໂມງ ຂອງວັນດຽວກັນ ທີ່ຫ້ອງປະຊຸມຊັ້ນ 3 (ຕໍ່ໜ້າລິບ ຕຶກຫ້ອງການກະຊວງການເງິນ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ/ວິສາຫະກິດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງກາຍກຳນົດເວລາ ຈະບໍ່ຮັບພິຈາລະນາ;
5. ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້;
6. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນ.

**ຫົວໜ້າຫ້ອງການກະຊວງ**

ສົມບູນ ອິນທະປັດຖາ